ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ປາຖະກະຖາ ວັນຊາດ ແລະ ວຽກສຳຄັນຕ່າງໆ





ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການເຜີຍແຜ່ມະຕິກອງປະຊຸມຄົບຄະນະຄັ້ງທີ 11 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ X; ວັນຊາດທີ 2 ທັນວາ ຄົບຮອບ 45 ປີ (2 ທັນວາ 1975-2 ທັນວາ 2020) ແລະ ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ (13 ທັນວາ 1920-13 ທັນວາ 2020) ຄົບຮອບ 100 ປີ ໃນວັນທີ 30 ພະຈິກ 2020 ທີ່ ສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເຜີຍແຜ່ຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ; ຊຶ່ງຜູ້ເຂົ້າຮ່ວມປະກອບດ້ວຍ: ບັນດາສະຫາຍຄະນະພັກ, ຄະນະພັກຮາກຖານ-ໜ່ວຍພັກ, ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງເຂົ້າຮ່ວມ.

ສະຫາຍເລຂາຄະນະພັກ ທຫລ ໄດ້ນຳສະເໜີບັນດາເນື້ອໃນຈິດໃຈຂອງມະຕິກອງປະຊຸມຄົບຄະນະຄັ້ງທີ 11 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ X. ພ້ອມນີ້, ໄດ້ຍົກໃຫ້ເຫັນມູນເຊື້ອ ແລະ ຄວາມໝາຍສຳຄັນຂອງວັນຊາດທີ 2 ທັນວາ ຊຶ່ງພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາ ສປປ ລາວ ໃນວັນທີ 2 ທັນວາ 1975 ໂດຍເປັນລັດປະຊາທິປະໄຕປະຊາຊົນ ທີ່ເກີດມາຈາກການຕໍ່ສູ້ເສຍສະຫຼະອັນໃຫຍ່ຫຼວງຂອງປະຊາຊົນລາວບັນດາເຜົ່າ, ລັດທີ່ມາຈາກປະຊາຊົນໂດຍປະຊາຊົນ ແລະ ເພື່ອປະຊາຊົນ; ພັກເຮົາໄດ້ວາງ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ສ້າງລະບອບປະຊາທິປະໄຕ ປະຊາຊົນຕາມຈຸດໝາຍສັງຄົມນິຍົມແລະວັນທີ 2 ທັນວາ ຍັງແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ເປັນຫຼາຍໆທົດສະວັດຂອງຊາດລາວເຮົາ; ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫຼະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ; ແມ່ນວັນທີ່ປະເທດລາວໄດ້ມີເອກະລາດສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆໃນເວທີປະຊາຄົມໂລກ. ວັນທີ 2 ທັນວາແມ່ນວັນແຫ່ງສັນຕິພາບ, ວັນແຫ່ງການກ້າວສູ່ຍຸກສະໄໝແຫ່ງການສ້າງປະເທດລາວສັນຕິພາບເອກະລາດປະຊາທິປະໄຕເອກະພາບ ແລະ ວັດທະນາຖາວອນ;




ໃນຕະຫຼອດໄລຍະ 45 ປີຜ່ານມາ ພາຍໃຕ້ການຊີ້ນຳ-ນຳພາຂອງພັກ ແລະ ດ້ວຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກອັນໄດ້ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ; ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ ແລະ ປອດໄພ; ເສດຖະກິດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ; ສ້າງໄດ້ບາດລ້ຽວໃໝ່ໃຫ້ແກ່ການສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນຕາມຈຸດໝາຍສັງຄົມນິຍົມ ເຮັດໃຫ້ປະຊາຊົນຮັ່ງມີ, ມີຄວາມຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ໃນໂອກາດດັ່ງກ່າວ; ສະຫາຍເລຂາຄະນະພັກ ທຫລ ຍັງໄດ້ຍົກໃຫ້ເຫັນຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງອາດີດຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວຄື: ທ່ານປະທານ ໄກສອນ ພົມວິຫານ ຊຶ່ງເພິ່ນເກີດເມື່ອວັນທີ 13 ທັນວາ 1920 ທີ່ບ້ານນາເຊງ ເມືອງຄັນທະບູລີ (ນະຄອນໄກສອນ ພົມວິຫານ) ແຂວງສະຫວັນນະເຂດ. ໃນຕະຫຼອດໄລຍະຜ່ານມາເພິ່ນໄດ້ອຸທິດຊີວິດ, ສະຕິປັນຍາ ແລະ ກຳລັງວັງຊາເຂົ້າໃນພາລະກິດປະຕິວັດຢ່າງສຸດຂີດ ແລະ ໃນຕະຫຼອດໄລຍະແຫ່ງການເປັນຜູ້ນຳສູງສຸດຂອງພັກ ແລະ ລັດເຮົາຍາມໃດກໍ່ໄດ້ຊີ້ທິດເຍືອງທາງແຫ່ງການກ້າວເດີນໄປສູ່ໄຊຊະນະຂອງການປະຕິວັດລາວ; ເພິ່ນເປັນຜູ້ນຳທີ່ເດັດຂາດ ແລະ ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ; ເພິ່ນເປັນແວ່ນແຍງອັນໃສແຈ້ງ ແລະ ເປັນແບບຢ່າງອັນປະເສີດເລີດລ້ຳດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນປະຕິວັດກໍ່ຄືແບບແຜນດຳລົງຊີວິດໃຫ້ພະນັກງານ, ສະມາຊິກພັກ, ນັກຮົບ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດ; ເພິ່ນໄດ້ອຸທິດຊີວິດຂອງຕົນດ້ວຍຄວາມບໍລິສຸດຜ່ອງໃສເພື່ອຜົນປະໂຫຍດຂອງຊາດ ແລະ ປະຊາຊົນເພື່ອອະນາຄົດຂອງລູກຫຼານ.

**#ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ